# ນາງຫລ້າ ເດັກຍິງ ທີ່ຖືກ “ຊຸກເຊື່ອງ” ໃນ ສປປ ລາວ ຍ້ອນຄວາມພິການ

ນາງຫລ້າ ເປັນພີ່ນ້ອງກັນກັບນາງນ້ອຍ ແລະ ຢູ່ໃນເຂດບ້ານດຽວກັນ, ລາວມີອາຍຸ 11 ປີ ແລະ ມີຄວາມພິການ. ລາວເປັນເດັກທີ່ເປັນມິດ ແລະ ມັກຢູ່ນຳຫມູ່ຄົນ. ພໍ່ແມ່ຂອງຫລ້າທຸກຍາກ ແລະ ບໍ່ສາມາດຫາລ້ຽງ ກຸ້ມຢູ່ກຸ້ມກິນໄດ້ ແລະ ພວກເຂົາຍັງມີລູກອີກ 4 ຄົນ ນອກຈາກນາງຫລ້າ. ພວກເຂົາບໍ່ຮູ້ວ່າເປັນຫຍັງ ນາງ ຫລ້າ ຈຶ່ງຕ່າງຈາກລູກອີກ 4 ຄົນຂອງພວກເຂົາ, ພວກເຂົາບໍ່ໄດ້ພາ ລາວໄປສູນການແພດຍ້ອນວ່າບໍ່ມີເງິນ ຈ່າຍຄ່າຕ່າງໆ. ພວກເຂົາກໍຍັງຮູ້ສຶກອາຍແທນນາງຫລ້າ ແລະ ບໍ່ຢາກປ່ອຍໃຫ້ຄົນໃນຊຸມຊົນເຫັນລູກທີ່ມີ ຄວາມພິການຂອງຕົນ ເພາະຄິດວ່າຄວາມພິການຂອງ ລູກຈະມີຜົນກະທົບຕໍ່ພວກເຂົາ. ນາງຫລ້າ ສາມາດ ປາກເວົ້າໄດ້ ແລະ ເປັນເດັກທີ່ເບີກບານດີ ແຕ່ການເວົ້າຈາຂອງລາວບາງທີກໍບໍ່ແຈ້ງ. ເວລາຜ່ານໄປ ຄົນໃນ ຄອບຄົວຂອງລາວກໍ່ຮຽນຮູ້ທີ່ຈະ ເຂົ້າໃຈລາວ. ນາງຫລ້າ ບໍ່ສາມາດເຂົ້າໃຈໄດ້ຫມົດທຸກອັນທີ່ຄົນເວົ້າກັບ ລາວ ແລະ ມີຄວາມຫຍຸ້ງ ຍາກໃນການປະຕິບັດຕາມການສັ່ງສອນ. ພໍ່ແມ່ຂອງນາງຫລ້າ ບໍ່ໄດ້ສົ່ງລາວເຂົ້າ ໂຮງຮຽນ ຍ້ອນຄິດ ວ່າລາວຈະບໍ່ສາມາດຮຽນຮູ້ຫຍັງໄດ້ ແລະ ມັນຈະເປັນການເສຍເງິນລ້າໆ.

- ວາລະການພັດທະນາແບບຍືນຍົງ 2030 ແນໃສ່ການພັດທະນາທີ່ເທົ່າທຽມກັນ ແລະ ມີສ່ວນຮ່ວມ ໂດຍບໍ່ປ່ອຍປະໃຜໄວ້ຂ້າງຫລັງ.
- ນາງຫລ້າ ແລະ ເດັກຍິງຄົນອື່ນໆທີ່ຄືກັນກັບລາວ ກຳລັງຖືກປະຖິ້ມໄວ້ຂ້າງຫລັງຢ່າງຊັດເຈນ.
- ນາງຫລ້າ ບໍ່ແມ່ນຜູ້ດຽວທີ່ຕົກຢູ່ໃນສະຖານະການນີ້, ຜົນການສຶກສາຄົ້ນຄ້ວາສາກົນທີ່ຈັດຂຶ້ນ ບໍ່ດົນມານີ້, ລວມທັງບົດລາຍງານຄວາມພິການທົ່ວໂລກ ແລະ ພາກພື້ນ, ສະແດງໃຫ້ເຫັນວ່າ ມີເດັກຍິງຫລາຍ ຄົນທີ່ຕົກຢູ່ໃນສະຖານະການດຽວກັນ.

## ເຫດຜົນທີ່ເຍົາວະຊົນ-ເດັກຍິງຄືນາງຫລ້າ ຖືກເບິ່ງຂ້າມ ແລະ ເຊື່ອງຊ້ອນ

- ການຂາດຂໍ້ມູນທີ່ ຖືກຕ້ອງຊັດເຈນ
- ທັດສະນະຄະຕິຂອງສັງຄົມຕໍ່ຜູ້ມີຄວາມພິການ
- ການຂາດຄວາມຮູ້ກ່ຽວກັບວິທີ່ໃຫ້ການຊ່ວຍເຫລືອ
- ເດັກຍິງ ແລະ ແມ່ຍິງທີ່ມີຄວາມພິການ ມີອັດຕາທີ່ຈະຖືກ ໃຊ້ຄວາມຮຸນແຮງສູງກ່ວາເດັກຍິງ ແລະ ແມ່ຍິງທົ່ວໄປ



# ການຂາດຂໍ້ມູນທີ່ຖືກຕ້ອງຊັດເຈນ ສປປ ລາວ

- ການຂາດຂໍ້ມູນທີ່ຖືກຕ້ອງຊັດເຈນ ສປປ ລາວ ໄດ້ມີການລິເລີ່ມທີ່ດີໃນການ ນໍາໃຊ້ແບບຄໍາຖາມ Washington Group of Questions (WG-SS) – ແບບສັ້ນ – ເຂົ້າໃນການສໍາຫລວດປະຊາກອນ ແລະ ທີ່ຊື່ງໃສ ທົ່ວປະເທດ 2015 (PHC). ຂໍ້ມູນກ່ຽວກັບຄວາມພິການສະແດງຜົນວ່າມີຢູ່ 2.77% ແລະ ມັນບໍ່ສອດຄ່ອງກັບອັດຕາ ສະເລ່ຍ ຂອງບົດລາຍງານຄວາມພິການທົ່ວໂລກຂອງປີ 2011 ທີ່ມີເຖິງ15.6% ເຊິ່ງເປັນ ລະດັບຕັ້ງແຕ່ 11,8% ໃນບັນດາປະເທດທີ່ມີລາຍໄດ້ສູງ ຫາ 18% ໃນບັນດາປະເທດທີ່ມີ ລາຍໄດ້ຕໍ່າ.




- ເຫດຜົນທີ່ກໍ່ໃຫ້ເກີດຄວາມແຕກຕ່າງຈາກອັດຕາທົ່ວໄປນັ້ນ ແມ່ນຍ້ອນຂາດການຝຶກອົບຮົມທີ່ພຽງພໍໃຫ້ ແກ່ບັນດານັກສໍາຫລວດຂອງ PHC ໃນການນໍາໃຊ້ ແບບສອບຖາມ WG-SS.
- ການຂາດຂໍ້ມູນທີ່ຖືກຕ້ອງກ່ຽວກັບຄວາມພິການນີ້, ຫມາຍວ່າຜູ້ມີຄວາມພິການຈໍານວນຫລາຍບໍ່ໄດ້ຖືກ ຮັບຮູ້ ແລະ ມັນສົ່ງຜົນໃຫ້ລັດຖະບານບໍ່ໄດ້ລວມ ເຂົາເຈົ້າເຂົ້າໃນການສ້າງແຜນບໍລິການດ້ານ ສາທາລະນະສຸກ, ການສຶກສາ, ລະດັບຊີວິດການເປັນຢູ່ ແລະ ການມີວຽກເຮັດງານທໍາ.

# ທັດສະນະຄະຕິຂອງສັງຄົມຕໍ່ຜູ້ມີຄວາມພິການ

- ການເບິ່ງໃນແງ່ລົບຕໍ່ຜູ້ມີຄວາມພິການໃນສັງຄົມນັ້ນເຮັດໃຫ້ເດັກຍິງຄືນາງຫລ້າມີຄວາມຫຍຸ້ງຍາກ ໃນການເປັນສ່ວນຫນຶ່ງຂອງສັງຄົມ.
- ບາງຄອບຄົວບໍ່ເຊື່ອວ່າເດັກຍິງຄືນາງຫລ້າມີສິດທິໃດໆ
- ພາສາທີ່ນໍາໃຊ້ເພື່ອນິຍາມຜູ້ມີຄວາມພິການນັ້ນ ມີລັກສະນະຈໍາແນກ ແລະ ເຮັດໃຫ້ເດັກຍິງຄືນາງຫລ້າ ໄດ້ຮັບເອົາ ຄວາມຮູ້ສຶກດ້ານລົບນີ້ເຂົ້າໃນຕົວລາວ.
- ການກໍານົດກົດຕາຍໂຕທີ່ໃຊ້ແມ່ນມີລັກສະນະເປັນທາງລົບ - ທີ່ວ່າ ເດັກຍິງຄືນາງຫລ້ານັ້ນ ບໍ່ສາມາດເຮັດຫຍັງໄດ້ເລີຍ.
- ຄວາມເຊື່ອທາງວັດທະນະທໍາກ່ຽວກັບ "ເວນ-ກໍາ" ບໍ່ພຽງແຕ່ສົ່ງຜົນກະທົບຕໍ່ນາງຫລ້າເທົ່ານັ້ນ ແຕ່ຍັງກະທົບຕໍ່ ຄອບຄົວຂອງລາວເຊັ່ນກັນ ເພາະພວກເຂົາທັງຫມົດຖືກຕັດ ແຍກອອກໂດຍສັງຄົມ.
- ຜູ້ໃຫ້ບໍລິການມີທັດສະນະຄະຕິລົບ ກໍ່ຫມາຍຄວາມວ່າ ເດັກ-ເຍົາວະຊົນຍິງທີ່ມີຄວາມພິການນັ້ນ ຖືກປະຕິເສດ ການເຂົ້າເຖິງບໍລິການ,
- ພວກເຂົາຕ້ອງພົບກັບການຈໍາແນກສອງຂັ້ນ ຫມາຍວ່າມີຄວາມສ່ຽງເປັນສອງເທົ່າຍ້ອນທັງເປັນເດັກ-ເຍົາວະຊົນເພດຍິງ ແລະ ທັງມີຄວາມພິການ ອີກ.



# ທັງພໍ່-ແມ່, ຊຸມຊົນ ແລະ ຜູ້ໃຫ້ບໍລິການບໍ່ຮູ້ວິທີການ ທີ່ຈະໃຫ້ເດັກຍິງຄືນາງຫລ້າ ມີສ່ວນຮ່ວມໄດ້ຄືແນວໃດ

ບໍ່ມີຄວາມຮັບຮູ້ກ່ຽວກັບຄວາມຕ້ອງການຂອງເດັກ-ເຍົາວະຊົນຍິງ ຄືນາງຫລ້າ ແລະ ຍັງມີຄວາມເຊື່ອອີກວ່າພວກເຂົາບໍ່ຕ້ອງການ ການໃຫ້ບໍລິການ. ພໍ່-ແມ່ ແລະ ຊຸມຊົນ ບໍ່ເຂົ້າໃຈ ຫລື ບໍ່ມີຄວາມຮູ້ກ່ຽວກັບສິດທິຂອງເຍົາວະຊົນ-ເດັກຍິງ ທີ່ມີ ຄວາມພິການ. ສະນັ້ນພວກເຂົາຈຶ່ງບໍ່ໄດ້ເຂົ້າໂຮງຮຽນ, ຖ້າໄດ້ເຂົ້າກໍ່ມີບັນຫາທີ່ວ່າຄູສອນບໍ່ຮູ້ວິທີສິດສອນເພື່ອ ຮັບປະກັນຄວາມຕ້ອງການດ້ານການຮຽນຮູ້ຂອງພວກເຂົາເຈົ້າ.




- ການບໍລິການດ້ານສາທາລະນະສຸກ, ສຶກສາ ແລະ ການມີວຽກເຮັດງານທໍາ ແມ່ນບໍ່ມີຄວາມເຂົ້າໃຈ ຫລື ຂີດຄວາມສາມາດທຈະສະໜອງຕຄວາມຕອງການຂອງບັນດາເດັກຍງຄນາງຫລາ.

ຈົນກ່ວາຂີດຄວາມສາມາດນີ້ໄດ້ຮັບການປັບປຸງ ແລະ ການສ້າງຄວາມຮັບຮູ້ແກ່ບັນດາຜູ້ໃຫ້ການບໍລິການກ່ຽວກັບການ ປະເມີນ, ການການົດໄດ້ ແລະ ຮູ້ເຖິງຄວາມຕ້ອງການສະເພາະຂອງເຍົາວະຊົນ-ເດັກຍິງທີ່ມີຄວາມພິການ, ເດັກຍິງຄື ນາງຫລ້າຈໍາຕ້ອງສືບຕໍ່ປະເຊີນກັບອຸປະສັກ, ຖືກຈໍາກັດ ແລະ ບໍ່ສາມາດເຂົ້າເຖິງການບໍລິການເຊັ່ນດຽວກັນກັບບຸກຄົນທົ່ວໄປ. ເມື່ອອຸປະສັກເລົ່ານີ້ຖືກກໍາຈັດອອກ, ນາງຫລ້າກໍຈະເລີ່ມຖືກເບິ່ງເຫັນໄດ້

## ພວກເຮົາຈະກໍາຈັດອຸປະສັກໄດ້ແນວໃດ?

- ປະຈຸບັນ ສປປ ລາວ ໄດ້ເປັນພາຄີສົນທິສັນຍາວ່າດ້ວຍສິດທິຜູ້ມີຄວາມພິການແລ້ວ, ຕໍ່ໄປກໍ່ຕ້ອງໄດ້ມີການຈັດຕັ້ງ  ປະຕິບັດ ໂດຍຄໍານຶງເຖິງ ເປົ້າຫມາຍການພັດທະນາແບບຍືນຍົງ.
- ນະໂຍບາຍແຫ່ງຊາດວ່າດ້ວຍຄວາມພິການ, ແຜນຍຸດທະສາດ ແລະ ແຜນປະຕິບັດງານຕ້ອງໄດ້ຮັບການຮັບຮອງ ແລະ ຈັດຕັ້ງປະຕິບັດ.
- ຕ້ອງມີຊັບພະຍາກອນທີ່ພຽງພໍ ໃນການຜັນຂະຫຍາຍ ແຜນຍຸດທະສາດ ແລະ ຈັດຕັ້ງປະຕິບັດແຜນງານແຫ່ງຊາດ • ປັບປຸງການເກັບກໍາຂໍ້ມູນກ່ຽວຜູ້ມີຄວາມພິການ ໂດຍອີງຕາມມາດຕະຖານສາກົນ

- ການເອົາບັນຫາຄວາມພິການເຂົ້າເປັນສ່ວນຫນຶ່ງ ແມ່ນວາລະຂອງທຸກຄົນ
- ປະຕິບັດຕາມຫລັກການຄຳຂວັນ “ຖ້າບໍ່ມີພວກເຮົາກໍບໍ່ກ່ຽວກັບພວກເຮົາ” ແລະ “ບໍ່ປ່ອຍປະໃຜໄວ້ຂ້າງ ຫລັງ”.
- ພໍ່-ແມ່, ຊຸມຊົນ ແລະ ຜູ້ໃຫ້ບໍລິການຕ້ອງໄດ້ຮັບຮູ້ກ່ຽວກັບສິດທິຂອງເຍົາວະຊົນ-ເດັກຍິງ ທີ່ມີຄວາມພິການ
- ການບໍລິການດ້ານການສຶກສາ, ສາທາລະນະສຸກ ແລະ ການມີວຽກເຮັດງານທຳ ຕ້ອງໄດ້ຮັບການພັດທະນາຂີດ ຄວາມສາມາດຂຶ້ນຕື່ມເພື່ອໃຫ້ພວກເຂົາສາມາດລວມເອົາ ເຍົາວະຊົນ-ເດັກຍິງ ທີ່ມີຄວາມພິການເຂົ້າເປັນສ່ວນ ຫນຶ່ງໃນການບໍລິການຂອງພວກເຂົາ.
- ຄວນມີການຄົ້ນຄ້ວາວິໄຈຕື່ມກ່ຽວກັບຄວາມຕ້ອງການຂອງເຍົາວະຊົນ-ເດັກຍິງ ທີ່ມີຄວາມພິການ.

# ນາງຫລ້າ ຈະຖືກເບິ່ງເຫັນໄດ້ ເມື່ອພວກເຮົາກຳຈັດອຸປະສັກ ທີ່ລາວປະເຊີນຢູ່ໃນປະຈຸບັນ



预览已结束，完整报告链接和二维码如下：

https://www.yunbaogao.cn/report/index/report?reportId=5_19723